ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ...3203.../ກປ

ນະຄອນຫຼວງວຽງຈັນ, ວັນທີ 24 JUL 2019

# ຂໍ້ຕົກລົງ

## ວ່າດ້ວຍການສ້າງ, ຄຸ້ມຄອງ ແລະ ເຜີຍແຜ່ສະຖິຕິກະສິກຳ (ສະບັບປັບປຸງ)

- ອີງຕາມກົດໝາຍວ່າດ້ວຍສະຖິຕິ (ສະບັບປັບປຸງ), ສະບັບເລກທີ 24/ສພຊ, ລົງວັນທີ 11 ພຶດສະພາ 2017;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວວຽກງານຂອງ ກະຊວງກະສິກຳ ແລະປ່າໄມ້;
- ອີງຕາມ ໜັງສືສະເໜີ ຂອງກົມແຜນການ ແລະ ການເງິນ ເລກທີ 4203/ກຜງ, ລົງວັນທີ 17 ກໍລະກົດ 2019.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ກົນໄກການປະສານງານເພື່ອໃຫ້ມີຂໍ້ມູນຖືກຕ້ອງ, ທັນເວລາ ແລະ ເປັນເອກະພາບຕາມຫຼັກວິທະຍາສາດສະຖິຕິ ແນໃສ່ສ້າງ, ປັບປຸງ ແລະ ຍົກລະດັບຄຸນນະພາບຂໍ້ມູນສະຖິຕິຂະແໜງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ເພື່ອຮັບປະກັນການເຊື່ອມໂຍງເຂົ້າກັບລະບົບສະຖິຕິແຫ່ງຊາດ, ພາກພື້ນ, ສາກົນ ແລະ ປະກອບສ່ວນເຂົ້າໃນການກຳນົດເປັນນະໂຍບາຍ ແລະ ແຜນຍຸດທະສາດຕາມທິດສີຂຽວ, ຍືນຍົງ ແລະ ເປັນມິດຕໍ່ສິ່ງແວດລ້ອມ.

**ມາດຕາ 2 (ປັບປຸງ) ສະຖິຕິກະສິກຳ**

ສະຖິຕິກະສິກຳ ແມ່ນຂໍ້ມູນ ຫຼື ຕົວເລກ ທີ່ໄດ້ມາຈາກລະບົບການລາຍງານບໍລິຫານ ແລະ ການສຳຫຼວດ ໂດຍຜ່ານຂະບວນການສຳພາດ, ເກັບກຳ, ສັງລວມ, ຄິດໄລ່, ປຸງແຕ່ງ ແລະ ວິໄຈ-ວິເຄາະ ຕາມຫຼັກວິທະຍາສາດສະຖິຕິ ສາມາດສ່ອງແສງເຖິງສະພາບຄວາມເປັນຈິງຂອງການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ເປັນໄມ້ຫຼາວັດແທກລະດັບການປ່ຽນແປງທາງດ້ານເສດຖະກິດ-ສັງຄົມ, ຄວາມ ໝັ້ນຄົງ ແລະ ສິ່ງແວດລ້ອມ ໃນແຕ່ລະໄລຍະ.

ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. ລະບົບສະຖິຕິກະສິກຳ: ໝາຍເຖິງ ການສັງລວມສະຖິຕິກະສິກຳໃນລະດັບສູນກາງ ແລະ ທ້ອງຖິ່ນ ໂດຍປະກອບມີ 2 ລະບົບຄື: ລະບົບການລາຍງານບໍລິຫານ ແລະ ລະບົບການສຳຫຼວດ;
2. ລະບົບການລາຍງານແບບບໍລິຫານ: ໝາຍເຖິງ ການເກັບກຳ, ການສັງລວມ ແລະ ການລາຍງານຂໍ້ມູນສະຖິຕິ ຢ່າງເປັນປົກກະຕິ ຂອງຫົວໜ່ວຍພື້ນຖານ ຕາມພາລະບົດບາດ ແລະ ພາຍໃຕ້ການຄຸ້ມຄອງຂອງຕົນ ທີ່ຕ້ອງໄດ້ສະໜອງໃຫ້ແຕ່ລະພາກສ່ວນທີ່ຮັບຜິດຊອບໃນແຕ່ລະຂັ້ນ;
3. ລະບົບການສຳຫຼວດ: ໝາຍເຖິງວິທີການເກັບກຳ, ສັງລວມ ໂດຍນຳໃຊ້ແບບສອບຖາມ, ຈົດນັບ, ສຳພາດ, ວັດແທກ, ຮູບພາບ, ພາບຖ່າຍທາງອາກາດ, ແບບທາງກົງ ແລະ ທາງອ້ອມ ຕາມວິທະຍາສາດດ້ານສະຖິຕິ ແລະ ໄລຍະເວລາ ທີ່ໄດ້ກຳນົດໄວ້ຢ່າງເປັນເອກະພາບກັນ ໃນແຕ່ລະການສຳຫຼວດ;
4. ການຜະລິດສະຖິຕິ ໝາຍເຖິງ ຂະບວນການເກັບກຳ, ສັງລວມ, ຄິດໄລ່, ວິເຄາະ, ວິໄຈ, ລາຍງານ ແລະ ເຜີຍແຜ່ຂໍ້ມູນສະຖິຕິຈາກການສຳຫຼວດ, ການລາຍງານບໍລິຫານ ແລະ ການຄົ້ນຄວ້າທົດລອງຕາມຫຼັກວິທະຍາສາດດ້ານສະຖິຕິ;
5. ສະຖິຕິທາງການ ໝາຍເຖິງ ສະຖິຕິ ທີ່ໄດ້ມາຈາກການລາຍງານບໍລິຫານ ແລະ ການສຳຫຼວດ ໂດຍຜ່ານຂະບວນການ ເກັບກຳ, ສັງລວມ, ຄິດໄລ່, ປຸງແຕ່ງ, ວິໄຈ ແລະ ຂະບວນການວິເຄາະຕາມວິທະຍາສາດດ້ານສະຖິຕິ ໂດຍໄດ້ຮັບການຮັບຮອງຈາກສູນສະຖິຕິກະສິກຳ;
6. ວິທະຍາສາດດ້ານສະຖິຕິ ໝາຍເຖິງ ຄວາມອຸດົມສົມບູນ, ຄວາມກວ້າງຂວາງ ແລະ ຄວາມເປັນໜຶ່ງດຽວໃນດ້ານວິທີການ, ຂະບວນການຜະລິດ ແລະ ການເຜີຍແຜ່ຂໍ້ມູນສະຖິຕິ ບົນພື້ນຖານນິຍາມ, ແນວຄວາມຄິດ, ຄູ່ມືແນະນຳ, ມາດຕະຖານສາກົນ, ປື້ມຫຼັກສູດວິທະຍາສາດດ້ານສະຖິຕິທີ່ສູນສະຖິຕິກະສິກຳ, ສູນສະຖິຕິແຫ່ງຊາດ ແລະ ສາກົນວາງອອກໃນແຕ່ລະໄລຍະ;
7. ການວິເຄາະ ໝາຍເຖິງຂະບວນການໄຈ້ແຍກ, ການກວດກາ, ການກັ່ນຕອງ, ການສຶກສາອົງປະກອບຕ່າງໆ ເພື່ອໃຫ້ອະທິບາຍໄດ້ຄວາມເປັນຈິງ, ສາຍພົວພັນ, ຄຸນລັກສະນະຂອງຂໍ້ມູນ ແລະ ຢັ້ງຢືນຄວາມຖືກຕ້ອງຂອງຕົວເລກສະຖິຕິ ແລະ ສາມາດນຳໃຊ້ສຶກສາຄົ້ນຄວ້າບັນຫາອື່ນໆໄດ້;
8. ການວິໄຈ ໝາຍເຖິງວິທີການໃດໜຶ່ງທີ່ໃຊ້ເພື່ອການຊອກຫາສາເຫດ ຫຼື ທີ່ມາຂອງບັນຫາຢ່າງມີຂັ້ນຕອນ ,ເປັນລະບົບລະບຽບ ແລະ ມີເປົ້າໝາຍທີ່ຈະແຈ້ງ;
9. ຕົວຊີ້ບອກ ໝາຍເຖິງ ຕົວເລກສະຖິຕິກະສິກຳ ເພື່ອນຳໃຊ້ໃນການວັດແທກຂະໜາດ, ການປະເມີນການປ່ຽນແປງການພັດທະນາຂະແໜງກະສິກຳ ແລະ ປ່າໄມ້ ໃນໄລຍະເວລາ ແລະ ໃນສະຖານທີ່ໃດໜຶ່ງ;
10. ຂໍ້ມູນດິບ ໝາຍເຖິງ ຂໍ້ມູນ ຫຼື ຕົວເລກທີ່ໄດ້ມາຈາກການສຳຫຼວດ ແລະ ການລາຍງານບໍລິຫານທີ່ຍັງບໍ່ທັນໄດ້ຮັບການປຸງແຕ່ງ ຕາມຫຼັກວິທະຍາສາດສະຖິຕິ;
11. ຖານຂໍ້ມູນ ໝາຍເຖິງ ຊຸດຂໍ້ມູນທີ່ໄດ້ສ້າງຂຶ້ນຢູ່ໃນລະບົບເອເລັກໂຕຣນິກ ຊຶ່ງສາມາດເຂົ້າເຖິງໄດ້ດ້ວຍຫຼາຍຮູບແບບ ແລະ ຫຼາຍວິທີ;
12. ການປຸງແຕ່ງສະຖິຕິກະສິກຳ ໝາຍເຖິງຂັ້ນຕອນໜຶ່ງຂອງການຜະລິດສະຖິຕິກ່ຽວກັບການສຶກສາຄວາມສອດຄ່ອງ ຫຼື ຄວາມເປັນໄປໄດ້ຂອງຂໍ້ມູນ, ການໃສ່ລະຫັດສາລະບານ, ການຈັດລຽງລຳດັບ, ການຈັດໝວດ, ການຈັດກຸ່ມຕາມຫຼັກວິທະຍາສາດສະຖິຕິ;
13. ຄອບຄົວ ໝາຍເຖິງຈຸລັງໜຶ່ງຂອງສັງຄົມ ຊຶ່ງມີ ຜົວ, ເມຍ, ລູກ ຫຼື ສະມາຊິກອື່ນໃນຄອບຄົວທີ່ມີສາຍພົວພັນຊຶ່ງກັນ ແລະ ກັນ ແລະ ດຳລົງຊີວິດຮ່ວມກັນ ໂດຍມີສຳມະໂນຄົວຢັ້ງຢືນຢ່າງຖືກຕ້ອງ;
14. ຄົວເຮືອນ ໝາຍເຖິງ ເຮືອນທີ່ມີບຸກຄົນ ຫຼື ກຸ່ມຄົນ ຊຶ່ງມີການກິນຢູ່ຮ່ວມກັນ ແລະ ດຳເນີນກິດຈະກຳປະຈຳວັນຮ່ວມກັນເປັນປະຈຳ; ຄົວເຮືອນໜຶ່ງປະກອບມີ ໜຶ່ງ ຫຼື ຫຼາຍຄອບຄົວ ທີ່ມີໜຶ່ງ ຫຼື ຫຼາຍສຳມະໂນຄົວ;